## ມິຊຊາອາທິດທີ 1 ກຳນົດບຳເພັນສິນ
## ວັນທີ 6 ມີນາ 2022



**ພຣະວໍລະສານໂດຍນັກບຸນລູກາ 4, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງສະເດັດຈາກຝັ່ງແມ່ນໍ້າຢໍແດນ. ພຣະຈິດໄດ້ພາພຣະອົງໄປຍັງໂຄກປ່ຽວ. ພຣະອົງປະທັບຢູ່ທີ່ນັ້ນ 40 ມື້ ແລະຖືກຜີປີສາດມາຫລອກລວງ. ຕະຫລອດເວລານັ້ນພຣະອົງບໍ່ໄດ້ຮັບປະທານຫຍັງເລີຍ. ເມື່ອລ່ວງໄປ 40 ວັນແລ້ວພຣະອົງກໍຊົງຫິວໂຫຍເຕັມທີ. ຜີປີສາດຈຶ່ງທູນພຣະອົງວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວ, ຈົ່ງບອກໃຫ້ກ້ອນຫີນກ້ອນນີ້ກາຍເປັນເຂົ້າຈີ່ເຖີດ. ພຣະເຢຊູເຈົ້າຕອບວ່າ: ມີຄຳຂຽນໄວ້ວ່າ: *ມະນຸດມີຊີວິດຢູ່ໄດ້ບໍ່ແມ່ນຍ້ອນເຂົ້າຈີ່ເທົ່ານັ້ນ.*

ຜີປີສາດຈຶ່ງພາພຣະອົງໄປຍັງທີ່ສູງແລະສະແດງໃຫ້ເຫັນອານາຈັກທັງຫລາຍໃນໂລກໄລຍະໜຶ່ງແລ້ວທູນວ່າ: ເຮົາຈະມອບອະນຸພາບແລະກຽດມຸງຄຸນແຫ່ງອານາຈັກເຫລົ່ານີ້ໃຫ້ທ່ານ ຍ້ອນມັນແມ່ນກຳມະສິດຂອງເຮົາ, ຈະມອບໃຫ້ໃຜກໍສຸດແລ້ວແຕ່ເຮົາ. ດັ່ງນັ້ນ, ຖ້າທ່ານຂາບລົງໄຫວ້ເຮົາທຸກສິ່ງເຫລົ່ານັ້ນກໍຈະເປັນຂອງທ່ານທັງໝົດ. ພຣະເຢຊູເຈົ້າຕອບວ່າ: ມີຄຳຂຽນໄວ້ວ່າ *ຈົ່ງນະມັດສະການພຣະເຈົ້າຂອງເຈົ້າ ແລະຮັບໃຊ້ພຣະອົງແຕ່ຜູ້ດຽວ.*

ແລ້ວຜີປີສາດກໍພາພຣະອົງໄປນະຄອນເຢລູຊາແລມ, ໃຫ້ປະທັບຢູ່ເທິງຍອດວິຫານ, ມັນທູນພຣະອົງວ່າ: ຖ້າທ່ານເປັນບຸດຂອງພຣະເຈົ້າຈິງແລ້ວກໍໃຫ້ໂຕນລົງໄປເຖີດ. ຍ້ອນມີຄຳຂຽນໄວ້ວ່າ: *ພຣະເປັນເຈົ້າຈະຮັບສັ່ງໃຫ້ເທວະດາມາປ້ອງກັນທ່ານ.* ແລະອີກບ່ອນໜຶ່ງຂຽນວ່າ: *ພວກເທວະດາຈະຊ້ອນຊູທ່ານໄວ້ບໍ່ໃຫ້ຕີນຂອງທ່ານຕຳກ້ອນຫີນ.* ພຣະເຢຊູເຈົ້າຕອບວ່າ: ພຣະຄຳພີກໍຍັງກ່າວອີກວ່າ: *ເຈົ້າຢ່າມາຫລອກລວງພຣະເຈົ້າຂອງເຈົ້າ.* ເມື່ອໃຊ້ທຸກວິຖີທາງຫລອກລວງພຣະອົງແລ້ວ, ມັນກໍໜີໄປຖ້າເຖິງໂອກາດໃໝ່ຈຶ່ງຈະກັບມາອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນວັນອາທິດທີໜຶ່ງກຳນົດບຳເພັນສິນປີນີ້, ບົດອ່ານທັງສາມບົດລ້ວນແຕ່ກ່າວເຖິງວາຈາທີ່ນຳພວກເຮົາໄປສູ່ຄວາມເຊື່ອ. ແລະອາໄສຄວາມເຊື່ອນີ້ພວກເຮົາຈຶ່ງຈະໄດ້ຮັບຊີວິດ.

ໃນບົດອ່ານທີໜຶ່ງຈາກໜັງສືປະມວນກົດໝາຍ, ໂມແຊໄດ້ເລົ່າຄືນເຫດການແລະສິ່ງມະຫັດສະຈັນທີ່ພຣະເຈົ້າໄດ້ກະທຳຕໍ່ປະຊາກອນຂອງພຣະອົງ, ບໍ່ວ່າຈະເປັນການເລືອກເອົາຊົນຊາດອິສຣາແອນ, ການທົດສອບພວກເຂົາຢູ່ປະເທດເອຢິບ, ແລະການປົດປ່ອຍພວກເຂົາອອກຈາກການເປັນຂ້ອຍທາດໄປສູ່ເສລີພາບໃນແຜ່ນດິນສັນຍາທີ່ອຸດົມໄປດ້ວຍນ້ຳນົມແລະນ້ຳເຜິ້ງ. ການເລົ່າຄືນເຫດການອັດສະຈັນທີ່ພຣະເຈົ້າກະທຳຕໍ່ປະຊາກອນຂອງພຣະອົງນີ້ເປັນການຊ່ວຍພວກເຂົາໃຫ້ເຂົ້າໃຈແລະເຊື່ອໝັ້ນໃນພຣະອົງຍິ່ງຂຶ້ນ.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລກໍເທດສອນຊາວໂຣມາວ່າ: ຄວາມເຊື່ອແມ່ນເກີດຈາກການຟັງວາຈາພຣະເຈົ້າ. ແລະການປະກາດວາຈາພຣະເຈົ້ານັ້ນທຳໃຫ້ຜູ້ຟັງໄດ້ຮັບຄວາມຣອດ. ດ້ວຍເຫດນີ້ຖ້າຜູ້ໃດຟັງວາຈາພຣະເຈົ້າແລະເຊື່ອໃນວາຈານັ້ນ, ບໍ່ວ່າຈະເປັນຊາວເກຣັກຫລືຊາວຢິວກໍຈະໄດ້ຮັບຄວາມຣອດ.

ສ່ວນໃນພຣະວໍລະສານ, ພຣະເຢຊູເຈົ້າໄດ້ຊະນະການປະຈົນຫລອກລວງຂອງຜີປີສາດໃນທີ່ປ່ຽວດ້ວຍອາໄສວາຈາຂອງພຣະອົງ. ຝ່າຍຜີປີສາດກໍເອົາວາຈາພຣະເຈົ້າມາທົດລອງພຣະເຢຊູ. ສ່ວນພຣະເຢຊູ, ພຣະອົງປຽບເໝືອນໂມແຊຄົນໃໝ່ທີ່ທຳໃຫ້ວາຈາພຣະເຈົ້າເປັນຈິງແລະມີຊີວິດໃນຕົວພຣະອົງ.

ສ່ວນພວກເຮົາຜູ້ເປັນສິດພຣະເຢຊູເຈົ້າ, ຜູ້ເຊື່ອໃນພຣະອົງ, ພວກເຮົາໄດ້ຮູ້ຈັກແລະຟັງວາຈາພຣະອົງບໍ? ວາຈາພຣະເຈົ້າໄດ້ເປັນຊີວິດແລະບ່ອນເພິ່ງອີງສຳລັບພວກເຮົາບໍ? ໃນຍາມທີ່ພວກເຮົາຖືກທົດສອບ ,ຖືກປະຈົນຫລອກລວງ, ພວກເຮົາໄດ້ນຳວາຈາພຣະເຈົ້າມາເປັນແສງສະວ່າງສ່ອງທາງໃຫ້ພວກເຮົາບໍ? ຫລືພວກເຮົາຫັນໄປເພິ່ງວາຈາມະນຸດ?

**ພາວະນາ**

ໂອພຣະເຢຊູ, ພຣະວາຈາຊົງຊີວິດ, ໃນກຳນົດບຳເພັນສິນນີ້ ໂຜດຊ່ວຍລູກໃຫ້ເຊື່ອແລະຟັງວາຈາຂອງພຣະອົງຫລາຍຂຶ້ນ. ເພາະວາຈາພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດສຳລັບລູກ. ໃນຍາມຫຍຸ້ງຍາກໃນຍາມຖືກທົດສອບ ໂຜດໃຫ້ລູກໄດ້ຕັ້ງໝັ້ນໃນວາຈາຊົງຊີວິດຂອງພຣະອົງເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ